# ກໍລະນີສຶກສາ: ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດກິດຈະກຳຂອງ ອາສາສະໝັກກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນທຳມະຊາດແບບຍືນຍົງ ບ້ານຫ້ວຍຊາຍ ເມືອງທ່າແຕງ ແຂວງເຊກອງ



ຂຽນໂດຍ: ເພັດດາວັນ ສີປະເສີດ

ກວດແກ້ໂດຍ: ເລນາ ວິໄລເພັດ ແລະ ນຸດສະຫວັນ ເພື່ອງສະຫວັນ

## 1. ຄວາມເປັນມາຂອງພື້ນທີ່ກໍລະນີສຶກສາ

ບ້ານຫ້ວຍຊາຍ ເປັນບ້ານໜຶ່ງທີ່ຕັ້ງຢູ່ເທດສະບານເມືອງທ່າແຕງ ແຂວງເຊກອງ, ເປັນບ້ານທີ່ມີຄວາມຫຼາກຫຼາຍດ້ານຊົນເຜົ່າ ແລະ ພາສາປາກເວົ້າ. ຊົນເຜົ່າຕະລຽງແມ່ນຊົນເຜົ່າຫຼັກຂອງບ້ານ, ນອກຈາກນັ້ນກໍຍັງມີຊົນເຜົ່າກຕູ່ ແລະ ຊົນເຜົ່າລາວ. ເນື່ອງຈາກວ່າບ້ານເປັນບ້ານເທດສະບານຂອງເມືອງທ່າແຕງ, ປະຊາຊົນຈິ່ງສາມາດໃຊ້ພາສາລາວໄດ້ຢ່າງຄ່ອງແຄ້ວ. ສໍາລັບອາຊີບຕົ້ນຕໍຂອງປະຊາຊົນແມ່ນເຮັດນາ ແລະ ເຮັດສວນເປັນສໍາຮອງ. ບ້ານພ້ອມກັນນັ້ນ, ບ້ານແມ່ນນອນຢູ່ໃນເຂດປ່າປ້ອງກັນແຫ່ງຊາດພູຕາຢືນ ທີ່ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງໄດ້ໃຫ້ຄວາມສໍາຄັນໃນການຄຸ້ມຄອງ ແລະ ອະນຸລັກຊັບພະຍາກອນທໍາມະຊາດ, ຊີວະນາໆ ພັນ ແລະ ລະບົບນິເວດໃນພື້ນທີ່ດັ່ງກ່າວ. ບ້ານກໍຍັງມີປ່າປ້ອງກັນພູຈອມ ທີ່ເປັນປ່າໄມ້ທີ່ສໍາຄັນສໍາລັບປະຊາຊົນບ້ານຫ້ວຍຊາຍ ແລະ ຊາວບ້ານໄດ້ເອົາໃຈໃສ່ໃນການປົກປັກຮັກສາ ເພາະປະຊາຊົນຢາກຮັກສາປ່າໄມ້ໄວ້ໃຫ້ລູກຫຼານໄດ້ນໍາໃຊ້ໃນອະນາຄົດ. ພູມສັນຖານຂອງບ້ານແມ່ນເປັນເຂດທົ່ງພຽງ ທີ່ມີປ່າໄມ້ອ້ອມຮອບ ແລະ ອາກາດຮ້ອນຊຸ່ມ ເໝາະແກ່ການກະສິກໍາ ໂດຍສະເພາະແມ່ນການປູກຝັງ. ນອກຈາກການເຮັດນາ ປະຊາຊົນແມ່ນປູກກາເຟ ແລະ ໄມ້ໃຫ້ໝາກເພື່ອເປັນສິນຄ້າສ້າງລາຍຮັບໃຫ້ແກ່ຄອບຄົວ.

ຮູບທີ1: ແຜນທີ່ບ້ານຫ້ວຍຊາຍ (ຮູບຈາກກູໂກເອີດ)



ຮູບທີ 2: ທີ່ຕັ້ງຂອງບ້ານຫ້ວຍຊາຍ



ຮູບທີ 3: ທາງໄປປ່າໄມ້ປ້ອງກັນຂອງບ້ານຫ້ວຍຊາຍ



**ກ. ຂໍ້ມູນດ້ານປະຊາກອນ ແລະ ປ່າໄມ້ມີດັ່ງນີ້**

| ລ/ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | ປະຊາກອນ | 2.683 ຄົນ, ຍິງ 1.264 ຄົນ |
| 2 | ຫຼັງຄາເຮືອນ | 120 |
| 3 | ຄອບຄົວ | 422 |
| 4 | ອາຊີບຕົ້ນຕໍ | ເຮັດນາ (60%) |
| 5 | ອາຊີບສຳຮອງ | ເຮັດສວນ (40%) |
| 6 | ຊົນເຜົ່າ | ຕະລຽງ 60%, ກະຕູ 20%, ລາວ 20% |
| 8 | ເນື້ອທີ່ທັງໝົດຂອງບ້ານ | 711,10 ເຮັກຕາ |
| 10 | ປ່າປ້ອງກັນພູຈອມ (ເຂດຄຸ້ມຄອງຂອງບ້ານ) | **286,57 ເຮັກຕາ** |

**ຂ. ການນຳໃຊ້ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ**

ປ່າໄມ້ແມ່ນເປັນແຫຼ່ງອາຫານທີ່ສຳຄັນ ສຳລັບປະຊາຊົນບ້ານຫ້ວຍຊາຍໃນປັດຈຸບັນ. ປະຊາຊົນພາຍໃນບ້ານທັງຍິງ ແລະ ຊາຍ ເຂົ້າປ່າເພື່ອຫາອາຫານ ແລະ ເພື່ອສ້າງລາຍຮັບໃຫ້ກັບຄອບຄົວເຊັ່ນ: ເກັບຜັກ, ເກັບເຫັດ, ເກັບໜໍ່ໄມ້, ເກັບໄມ້ທີ່ຕາຍໄປເຮັດຟືນ, ໝູປ່າ, ກະຮອກ ແລະ ໝາກແໜ່ງ ຊຶ່ງເປັນແຫຼ່ງລາຍຮັບເສີມຂອງຊາວບ້ານ. ກ່ອນປີ 1994 ປະຊາຊົນເຂົ້າປ່າເພື່ອລ່າສັດ ແລະ ນຳໃຊ້ໄມ້ໃນການເຮັດເຮືອນ, ເຮັດໂຮງຮຽນ ແລະ ສະຖານທີ່ສາທາລະນະອື່ນໆ ເຊັ່ນ: ນຳໃຊ້ປ່າໄມ້ສຳລັບການປຸກສ້າງເຮືອນຊານ ຂອງປະຊາຊົນພາຍໃນບ້ານ ໂດຍປ່າທີ່ນຳໃຊ້ແມ່ນປ່າປ້ອງກັນພູຈອມ. ຫຼັງຈາກປີ 1994 ບ້ານຫ້ວຍຊາຍໄດ້ຮັບຂໍ້ມູນການເຜີຍແຜ່ຈາກເມືອງກ່ຽວກັບກົດລະບຽບໃນການອະນຸລັກສັດນໍ້າ ສັດປ່າ ເຮັດໃຫ້ປະຊາຊົນຢຸດເຊົາການເຂົ້າປ່າເພື່ອລ່າສັດແຕ່ປີນັ້ນມາຈົນເຖິງປັດຈຸບັນ. ປີ 2022 ທີ່ຜ່ານມາແມ່ນມີການນຳໃຊ້ໄມ້ໃນປ່າປ້ອງກັນພູຈອມເພື່ອເຮັດຫ້ອງການບ້ານ ໂດຍໄດ້ສະເໜີຫາຂັ້ນເມືອງ ແລະ ໄດ້ຮັບການອະນຸມັດໃນການນຳໃຊ້ໄມ້ໃນພື້ນທີ່ດັ່ງກ່າວ ເພາະວ່າບ້ານມີຄວາມຈຳເປັນໃນການສ້າງຫ້ອງການບ້ານ. ສຳລັບການນຳໃຊ້ແຫຼ່ງນໍ້າໃນເມື່ອກ່ອນແມ່ນມີຄວາມຫຼາກຫຼາຍເນື່ອງຈາກວ່ານໍ້າສະອາດ, ປະຊາຊົນພາຍໃນບ້ານໃຊ້ອາບ, ນຳໃຊ້ສຳລັບຄົວເຮືອນ. ປະຊາຊົນຫາອາຫານຈາກນໍ້າເຊັ່ນ: ກຸ້ງ, ຫອຍ, ປູ, ປາ. ແມ່ນໍ້າສາຍຫຼັກຂອງບ້ານຫ້ວຍຊາຍແມ່ນຫ້ວຍຊາຍ ແລະ ຫ້ວຍນໍ້າໃສ ຊຶ່ງເປັນແຫຼ່ງອາຫານ ແລະ ນຳໃຊ້ນໍ້າສຳລັບຄົວເຮືອນໃນເມື່ອກ່ອນ. ປັດຈຸບັນນີ້ທັງສອງແມ່ນໍ້າແມ່ນບໍ່ສາມາດນຳໃຊ້ໄດ້ ເນື່ອງຈາກນໍ້າເປິເປື້ອນ ແລະ ບົກແຫ້ງຍ້ອນການຖິ້ມຂີ້ເຫຍື້ອຊະຊາຍຂອງປະຊາຊົນ ແລະ ບັນດາຜູ້ປະກອບການທີ່ປ່ອຍນໍ້າເສຍລົງສູ່ແມ່ນໍ້າທຳມະຊາດ, ອີກຢ່າງໜຶ່ງປ່າໄມ້ຢູ່ແຄມນໍ້າກໍຖືກຕັດໝົດ ຍ້ອນການເຮັດສວນຂອງປະຊາຊົນ ແລະ ການຂະຫຍາຍພື້ນທີ່ໃນການສ້າງຣີສອດ ແລະ ບ້ານພັກຂອງນັກລົງທຶນ.

**ຄ. ຂໍ້ມູນກ່ຽວກັບການສະໜັບສະໜູນກິດຈະກຳຂອງໄວໜຸ່ມຂອງໂຄງການໄລຟ໌**

ໂຄງການສົ່ງເສີມການຮຽນຮູ້ເລື່ອງທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ (LIFE) ພາຍໃຕ້ອົງການບ້ານຈຸດສຸມສາກົນ (VFI) ໄດ້ຖືກຈັດຕັ້ງປະຕິບັດມາແຕ່ປີ 2014 ໃນການສ້າງຄວາມອາດສາມາດໃຫ້ຄູ່ຮ່ວມງານພາກລັດ, ອົງການສາກົນ ແລະ ອົງການຈັດຕັ້ງສັງຄົມ ເພື່ອສະໜັບສະໜູນການເຂົ້າເຖິງການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງປະຊາຊົນຜູ້ທຸກຍາກ. ພ້ອມກັນນັ້ນ ໂຄງການໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ນັກກົດໝາຍຜູ້ໜຸ່ມນ້ອຍໃນການມີສ່ວນຮ່ວມກັບຊຸມຊົນໃນການສົນທະນາກ່ຽວກັບບັນຫາການນຳໃຊ້ທີ່ດິນ ແລະ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ຊັບພະຍາກອນທຳມະຊາດ ແລະ ໃຫ້ຄວາມຮູ້ດ້ານກົດໝາຍແກ່ຊຸມຊົນ. ໂຄງການໄດ້ຮ່ວມມືກັບຫຼາຍພາກສ່ວນເຊັ່ນ: ຄູ່ຮ່ວມພັດທະນາ, ອົງການສາກົນ, ອົງການຈັດຕັ້ງສັງຄົມ, ພາກລັດ ແລະ ສະຖາບັນການສຶກສາ. ແຕ່ປີ 2019 ເປັນຕົ້ນມາໂຄງການໄດ້ຮ່ວມມືກັບສູນບໍລິການກົດໝາຍເພື່ອປະຊາຊົນ (CLE) ພາຍໃຕ້ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດໃນການສ້າງຄວາມເຂັ້ມແຂງໃຫ້ນັກສຶກສາກົດໝາຍໃນການເຜີຍແຜ່ຂໍ້ມູນກ່ຽວກັບການອະນຸລັກທີ່ດິນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດໃນບ້ານເກີດຂອງເຂົາເຈົ້າ. ຊຶ່ງວ່າໂຄງການ LIFE ໄດ້ຮັບອາສາສະໝັກທີ່ເປັນນັກສຶກສາຈາກຄະນະນິຕິສາດ ແລະ ລັດຖະສາດມາຈາກຫຼາຍແຂວງທົ່ວປະເທດ 3 ລຸ້ນ ແລະ ມີຈຳນວນທັງ ໝົດ 69 ຄົນ. ໃນນັ້ນ ນາງ ປິ່ງຄຳ ແມ່ນ ໜຶ່ງໃນອາສາສະໝັກຂອງໂຄງການລຸ້ນທີ 2 ທີ່ມາຈາກບ້ານຫ້ວຍຊາຍ, ເມືອງທ່າແຕງ, ແຂວງເຊກອງ ທີ່ໄດ້ເຜີຍແຜ່ຄວາມຮູ້ດ້ານກົດໝາຍທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ກັບປະຊາຊົນໃນບ້ານເກີດຂອງຕົນເອງ. ການຈັດຕັ້ງປະຕິບັດກິດຈະກຳຂອງອາສາສະໝັກຢູ່ບ້ານຫ້ວຍຊາຍແມ່ນມີ 3 ກິດຈະກຳຄື: ເກັບກຳຂໍ້ມູນກ່ຽວກັບບັນຫາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ການເຜີຍແຜ່ກົດໝາຍທີ່ກ່ຽວຂ້ອງກັບບັນຫາບູລິມະສິດໃຫ້ກັບປະຊາຊົນພາຍໃນບ້ານ ແລະ ການດຳເນີນກິດຈະກຳເພື່ອແກ້ໄຂບັນຫາບູລິມະສິດ ຫຼື ການໃຫ້ຄວາມຮູ້ເພີ່ມເຕີມໃນການແກ້ໄຂບັນຫາ. ຫຼັງຈາກສຳເລັດການຈັດຕັ້ງປະຕິບັດ 3 ກິດຈະກຳດັ່ງກ່າວ ໂຄງການໄດເກັບກຳຂໍ້ມູນ ຂໍ້ມູນເພື່ອປະເມີນຄືນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດກິດຈະກຳໂຄງການຂອງໄວໜຸ່ມໃນວັນທີ 7-9 ເດືອນກັນຍາ 2023 ໂດຍມີການສຳພາດປະຊາຊົນ ແລະ ພະນັກງານເມືອງທີ່ກ່ຽວຂ້ອງ.

## 2. ບັນຫາກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດພາຍໃນບ້ານ

ໃນປັດຈຸບັນບ້ານໄດ້ກຳນົດເອົາສອງບັນຫາຫຼັກທີ່ຕ້ອງການແກ້ໄຂ ແລະ ປູກຈິດສຳນຶກໃຫ້ປະຊາຊົນຄື: ການຕັດໄມ້ທຳລາຍປ່າ ເພື່ອຂະຫຍາຍເນື້ອທີ່ທຳການຜະລິດ ແລະ ຕັດໄມ້ຂາຍໃຫ້ໂຮງງານເຟີນີເຈີ, ອີກບັນຫາໜຶ່ງແມ່ນສາຍນ້ຳເປິເປື້ອນ ເນື່ອງຈາກການປ່ອຍສານເຄມີຈາກສາວນກາເຟ, ສວນມັນຕົ້ນລົງໃນແຫຼ່ງນ້ຳ ແລະ ການຖິ້ມຂີ້ເຫຍື້ອລົງແຫຼ່ງນ້ຳທຳມະຊາດ. ປະຊົນໃຫ້ຄວາມສຳຄັນສອງບັນຫາດັ່ງກ່າວ ແລະ ຢາກໃຫ້ເກີດມີການປ່ຽນແປງທີ່ດີຂຶ້ນໃນການຄູ້ມຄອງແຫຼ່ງນ້ຳ ແລະ ຊັບພະຍາກອນປ່າໄມ້.

- ບັນຫາກ່ຽວກັບການນຳໃຊ້ປ່າໄມ້: ຜ່ານມາມີຄົນພາຍໃນບ້ານລັກລອບເຂົ້າໄປຕັດໄມ້ເພື່ອຂາຍໃຫ້ຄົນແຂວງອື່ນທີ່ມາເຮັດໂຮງງານເຟີນີເຈີພາຍໃນເມືອງ, ຖາງປ່າເພື່ອເຮັດສວນກາເຟ ແລະ ສວນມັນຕົ້ນ ໂດຍໄດ້ມີການຕັດຕົ້ນໄມ້ໃຫຍ່ນຳ ຊຶ່ງນຳໃຊ້ວິທີການຫັ່ນເພື່ອໃຫ້ຕົ້ນໄມ້ຄ່ອຍໆ ຕາຍ ເພື່ອບໍ່ໃຫ້ອຳນາດການປົກຄອງບ້ານສົງໃສ ແລະ ບໍ່ໃຫ້ມີຄວາມຜິດ. ສຳລັບການແກ້ໄຂໃນໄລຍະຜ່ານມາ, ອຳນາດການປົກຄອງບ້ານໄດ້ເຊີນເອົາຜູ້ກະທຳຜິດເຂົ້າມາຕັກເຕືອນ ແລະ ສັ່ງໃຫ້ຢຸດເຊົາເຮັດສວນ ເພາະວ່າເປັນດິນລັດ ແລະ ຜູ້ທີ່ເຂົ້າມາບຸກເບີກແມ່ນມີດິນນາແລ້ວ ແລະ ໄດ້ປຸກລະດົມໃຫ້ເຮັດນາ.
- ບັນຫາໃນການນຳໃຊ້ແຫຼ່ງນ້ຳທຳມະຊາດ: ໃນປັດຈຸບັນນີ້ ປະຊາຊົນບໍ່ສາມາດນຳໃຊ້ນ້ຳຫ້ວຍຊາຍ ແລະ ຫ້ວຍນ້ຳໃສໄດ້ຢ່າງເຕັມທີ່ ເນື່ອງຈາກວ່ານ້ຳເປື້ອນຍ້ອນການປ່ອຍສານເຄມີຈາກສວນມັນຕົ້ນ ແລະ ການເຮັດກະສິກຳອື່ນໆ ລົງໃນແມ່ນ້ຳ, ການຖິ້ມຂີ້ເຫຍື້ອລົງໃນແມ່ນ້ຳຂອງປະຊາຊົນ ແລະ ການສ້າງບ້ານພັກ ແລະ ລີສອດຢູ່ແຄມຫ້ວຍຊາຍ. ໃນປັດຈຸບັນ ນ້ຳແມ່ນບົກແຫ້ງໃນລະດູແລ້ງ, ມີຄວາມເປິເປື້ອນ ເຕັມໄປດ້ວຍຂີ້ເຫຍື້ອ ແລະ ບໍ່ສາມາດນຳໃຊ້ໄດ້. ບັນຫານີ້ແມ່ນເປັນບັນຫາທີ່ສຳຄັນຂອງບ້ານຫ້ວຍຊາຍເພາະວ່າສັດນ້ຳທີ່ເຄີຍຫາເປັນອາຫານແມ່ນບໍ່ສາມາດຫາໄດ້ເລີຍ.

ຮູບທີ 4: ປ່າປ້ອງກັນຂອງບ້ານຫ້ວຍຊາຍ





ຮູບທີ 5: ການຖິ້ມຂີ້ເຫຍື້ອລົງນ້ຳຫ້ວຍຊາຍ

## 3. ວິທີການ

ການສ້າງກໍລະນີສຶກສານີ້ແມ່ນໄດ້ນຳໃຊ້ 2 ວິທີການຫຼັກຄື: ທົບທວນເອກະສານ ແລະ ພາກປະຕິບັດຕົວຈິງ. ສຳລັບການທົບທວນເອກະສານແມ່ນໄດ້ອີງໃສ່ກິດຈະກຳທີ່ຈັດຕັ້ງປະຕິບັດໃນໄລຍະຜ່ານມາເຊັ່ນ: ບົດລາຍງານແຜນວາດສາຍນ້ຳຈາກການເກັບກຳຂໍ້ມູນ ແລະ ການເຜີຍແຜ່ຂໍ້ມູນດ້ານກົດໝາຍທີ່ກ່ຽວຂ້ອງກັບການອະນຸລັກ

ແຫຼ່ງນໍ້າ ແລະ ຊັບພະຍາກອນທໍາມະຊາດ ແລະ ການຄຸ້ມຄອງສານເຄມີ. ພ້ອມກັນນັ້ນກໍໄດ້ມີການທົບທວນກົດໝາຍປ່າໄມ້ ແລະ ຄໍາແນະນໍາວ່າດ້ວຍການຄຸ້ມຄອງປ່າໄມ້ຂັ້ນບ້ານ ເພື່ອນໍາມາສະໜັບສະໜູນການສ້າງຕັ້ງປ່າປ້ອງກັນບ້ານ ແລະ ການສ້າງຕັ້ງຄະນະຄຸ້ມຄອງປ່າໄມ້ຂັ້ນບ້ານ.

ສໍາລັບພາກປະຕິບັດຕົວຈິງ, ໄດ້ມີການສໍາພາດເອົາຂໍ້ມູນຕົວຈິງຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນບ້ານ ແລະ ຂັ້ນເມືອງຄື:

- ຂັ້ນບ້ານ: ສໍາພາດອໍານາດການປົກຄອງບ້ານ ເພື່ອເອົາຂໍ້ມູນປະຫວັດການນໍາໃຊ້ປ່າໄມ້ພາຍໃນບ້ານ, ສໍາພາດກຸ່ມຍິງ ເພື່ອເຂົ້າໃຈກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງ ໃນການນໍາໃຊ້ ແລະ ຄຸ້ມຄອງປ່າໄມ້ ແລະ ສໍາພາດກຸ່ມຊາຍ ພ້ອມທັງແຕ້ມແຜນວາດການນໍາໃຊ້ປ່າໄມ້ ແລະ ເຂດທີ່ຕ້ອງການເຮັດປ່າປ້ອງກັນຂອງບ້ານ. ຫຼັງຈາກກຸ່ມຊາຍແຕ້ມແຜນວາດແລ້ວ ກໍໃຫ້ກຸ່ມແມ່ຍິງມາມີເຫັນຕໍ່ກັບແຜນວາດນັ້ນວ່າ ແມ່ຍິງເຫັນດີບ່ອນທີ່ຕ້ອງການສ້າງປ່າປ້ອງກັນບໍ ຊຶ່ງກຸ່ມຍິງ ແລະ ກຸ່ມຊາຍໄດ້ສົນທະນາກັນ ແລະ ເຫັນດີເປັນເອກະພາບໃນການກໍານົດ ຂອບເຂດປ່າປ້ອງກັນຂອງບ້ານ. ທີມງານອາສາສະ ໝັກ ແລະ ໂຄງການຍັງໄດ້ສໍາພາດບຸກຄົນເພື່ອເອົາຂໍ້ມູນກ່ຽວກັບຄວາມຮູ້ສຶກຕໍ່ກິດຈະກໍາ ແລະ ການສົ່ງຕໍ່ຄວາມຮູ້ພາຍໃນຄອບຄົວ ແລະ ບ້ານໃກ້ເຮືອນຄຽງ.
- ຂັ້ນເມືອງ: ສົນທະນາກັບພະນັກງານຍຸຕິທໍາເມືອງ ແລະ ກະສິກໍາເມືອງ ເພື່ອເອົາຂໍ້ມູນກ່ຽວກັບຜົນໄດ້ຮັບ ແລະ ຄວາມສໍາຄັນຂອງກິດຈະກໍາຕໍ່ກັບຂັ້ນເມືອງ ແລະ ການນໍາໃຊ້ບົດຮຽນ ແລະ ປະສົບການຂອງເມືອງໃນການເຮັດກິດຈະກໍາຢູ່ບ້ານອື່ນໆ.

| ກຸ່ມທີ່ຖືກສໍາພາດ | ລວມ | ຍິງ | ຊາຍ |
|---|---|---|---|
| ພະນັກງານຂັ້ນເມືອງ | 4 | 1 | 3 |
| ອໍານາດການປົກຄອງບ້ານ | 4 | 0 | 3 |
| ປະຊາຊົນ (ກຸ່ມຍິງ ແລະ ກຸ່ມຊາຍ) | 35 | 15 | 20 |
| ປະຊາຊົນ (ສໍາພາດດ່ຽວ) | 4 | 2 | 2 |

## 4. ສັງລວມກິດຈະກໍາທີ່ອາສາສະໝັກໄດ້ຈັດຕັ້ງປະຕິບັດພາຍໃນບ້ານ

### ກ. ການເກັບກໍາຂໍ້ມູນໂດຍໃຊ້ແຜນວາດສາຍນໍ້າ

ກິດຈະກໍາແຜນວາດສາຍນໍ້າແມ່ນກິດຈະກໍາທໍາອິດທີ່ອາສາສະໝັກໂຄງການໄລຟ໌ລົງໄປຈັດຕັ້ງປະຕິບັດຢູ່ບ້ານຫ້ວຍຊາຍເພື່ອສຶກສາບັນຫາທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນພາຍໃນບ້ານ. ຊຶ່ງອາສາສະໝັກກໍໄດ້ຂໍ້ມູນບັນຫາຫຼາຍຢ່າງທີ່ເກີດຂຶ້ນພາຍໃນບ້ານເຊັ່ນ: 1. ສີດຢາຂ້າຫຍ້າໃນສວນກະເຟ, ສວນມັນ ແລະ ສວນຜັກ, ໃຊ້ສານເຄມີແລ້ວລ້າງລົງຫ້ວຍນໍ້າເຮັດໃຫ້ນໍ້າເຈືອປົນກັບສານເຄມີ ເຮັດໃຫ້ນໍ້າມີສານພິດບໍ່ສາມາດໃຊ້ໄດ້ , ສັດນໍ້າຫຼຸດໜ້ອຍລົງ, ປະຊາຊົນຖິ້ມຂີ້ເຫຍື້ອລົງຫ້ວຍນໍ້າຫຼາຍບໍ່ມີການປົກປັກສາແຫ່ງນໍ້າ ຈຶ່ງເຮັດໃຫ້ຂີ້ເຫຍື້ອຕົກຄ້າງ ໂດຍບໍ່ມີການເກັບຮັກຮັກສາ, ມີກອງຂີ້ເຫຍື້ອຕາມແຄມທາງ ແລະ ປ່າໄມ້; 2. ການຕັດໄມ້ທໍາລາຍປ່າເພື່ອເຮັດສວນເພີ່ມຂຶ້ນ. ສະນັ້ນ, ບ້ານຈຶ່ງກໍານົດເອົາສອງບັນຫາຫຼັກເພື່ອໃຫ້ອາສາສະໝັກ ແລະ ໂຄງການຊ່ວຍແກ້ໄຂ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org



ຮູບທີ 6: ກິດຈະກຳແຕ້ມແຜນອາດສາຍນ້ຳ

**ຂ. ການປູກຈິດສຳນຶກເລື່ອງກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ**

ອີງໃສ່ສອງບັນຫາບຸລິມະສິດທີ່ຊາວບ້ານໄດ້ກຳນົດຮ່ວມກັນ, ຄູຝຶກໂຄງການໄດ້ມີການຄັດເລືອກມາດຕາກົດໝາຍ ແລະ ພັດທະນາຫຼັກສູດເພື່ອຝຶກອົບຮົມໃຫ້ອາສາສະໝັກ. ຫຼັງຈາກນັ້ນອາສາສະໝັກໄດ້ຝຶກອົບຮົມຕໍ່ໃຫ້ຂັ້ນບ້ານ ໂດຍເນັ້ນໃສ່ ຫົວຂໍ້ທີ່ຕິດພັນກັບບັນຫາທີ່ເກີດຂຶ້ນຢູ່ຂັ້ນບ້ານ 2 ຫົວຂໍ້ຫຼັກຄື: ການອະນຸລັກຊັບພະຍາກອນທຳມະຊາດ ແລະ ສິດ ແລະ ພັນທະຂອງຜູ້ໃຊ້ສານເຄມີ. ໄດ້ມີການນຳສະເໜີມາດຕາກົດໝາຍຜ່ານໂຟສເຕີຄື: ອະນຸລັກຊັບພະຍາກອນທຳມະຊາດ, ສິດ ແລະ ພັນທະຂອງຜູ້ໃຊ້ສານເຄມີ, ແລະ ການສາຍວິດີໂອ: ວິດີໂອນ້ຳແຫ້ງ (ວິດີໂອ 2 ນາທີ ກ່ຽວກັບການປ່ຽນແປງ), ວິດີໂອຜົນກະທົບຂອງການນຳໃຊ້ສານເຄມີ ແລະ ການແນະນຳກ່ຽວກັບເພສເພື່ອໃຫ້ປະຊາຊົນຕິດຕາມ ແລະ ນຳໃຊ້ຂໍ້ມູນ. ພ້ອມກັນນັ້ນກໍໄດ້ມີການເຜີຍແຜ່ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ), ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ມາດຕາ 7 (ປັບປຸງ) ພັນທະປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້. ຂໍ້ມູນດັ່ງກ່າວເປັນການສ້າງຄວາມເຂົ້າໃຈ ແລະ ປູກຈິດສຳນຶກໃຫ້ປະຊາຊົນໃນການປົກປັກຮັກສາປ່າໄມ້ ແລະ ແຫຼ່ງນ້ຳ.



ຮູບທີ 7: ກິດຈະກຳປູກຈິດສຳນຶກເລື່ອງກົດໝາຍ

**ຄ. ຝຶກອົບຮົມກ່ຽວກັບນະໂຍບາຍປ່າໄມ້ບ້ານ, ປັບປຸງນະໂຍບາຍປ່າໄມ້ບ້ານ, ຝຶກອົບຮົມໃຫ້ອຳນາດການປົກຄອງບ້ານ**

ຫຼັງຈາກກິດຈະກຳຄັ້ງທີສອງສຳເລັດ, ອາສາສະໝັກໂຄງການ ແລະ ທີມງານຄູຝຶກໄດ້ຈັດຝຶກອົຮົມກ່ຽວກັບການຄຸ້ມຄອງປ່າໄມ້ບ້ານໃຫ້ກັບພະນັກງານລັດຂັ້ນເມືອງທີ່ກ່ຽວຂ້ອງ ແລະ ອຳນາດປົກຄອງບ້ານຫ້ວຍຊາຍ. ເຊິ່ງເນື້ອໃນການຝຶກອົບຮົມແມ່ນເນັ້ນໃສ່ການຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມມີການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຊົມໃຊ້. ພ້ອມກັນນັ້ນ ກໍໄດ້ເນັ້ນໃສ່ພາລະບົດບາດຂອງປ່າໄມ້ຂັ້ນບ້ານໃນການປົກປັກຮັກສາປ່າໄມ້ພາຍໃນບ້ານຂອງຕົນເອງໃຫ້ມີຄວາມຍືນຍົງ, ໂຄງການຍັງໄດ້ຊ່ວຍບ້ານໃນການຮ່າງພາລະບົດ ບາດຂອງປ່າໄມ້ບ້ານອີກດ້ວຍ.




ຮູບທີ 8: ການຝຶກອົບຮົມກົດໝາຍໃຫ້ອຳນາດການປົກຄອງບ້ານ

**5. ເນື້ອໃນກົດໝາຍທີ່ອາສາສະໝັກເຜີຍແຜ່ກ່ຽວຂ້ອງກັບບັນຫາຂອງບ້ານຄືແນວໃດ ແລະ ຊ່ວຍແກ້ໄຂບັນຫາແນວໃດ**

ເນື້ອໃນກົດໝາຍທີ່ອາສາສະໝັກ ແລະ ທີມງານໂຄງການໄດ້ເຜີຍແຜ່ໃຫ້ບ້ານຫ້ວຍຊາຍແມ່ນໄດ້ລະບຸລາຍລະອຽດໄວ້ຢູ່ໃນຂໍ້ 3 (ຂ), ແຕ່ໃນກໍລະນີສຶກສານີ້ແມ່ນຈະເນັ້ນໃສ່ລາຍລະອຽດຜົນໄດ້ຮັບຈາກການໃຫ້ຄວາມຮູ້ທີ່ກ່ຽວຂ້ອງກັບການປົກປັກຮັກສາປ່າໄມ້ ເນື່ອງຈາກວ່າບ້ານນີ້ແມ່ນໄດ້ກຳນົດເອົາການຟື້ນຟູ ແລະ ການປົກຮັກສາປ່າໄມ້ເປັນກິດຈະກຳສຸດທ້າຍ ເພື່ອແກ້ໄຂບັນຫາ ແລະ ຕ້ອງການສ້າງກົດລະບຽບ ແລະ ຄະນະປ່າໄມ້ບ້ານໃນການປົກປັກຮັກສາປ່າໄມ້. ເນື້ອໃນກົດໝາຍທີ່ໄດ້ເຜີຍແຜ່ຫຼັກໆທີ່ກ່ຽວຂ້ອງກັບປ່າໄມ້ ໃນກິດຈະກຳທີ ສອງ ແລະ ສາມມີດັ່ງນີ້: ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ), ສະບັບເລກທີ 64/ສພຊ, ລົງວັນທີ 13ມິຖຸນາ 2019, ມາດຕາ 7 (ປັບປຸງ) ພັນທະປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້,ການວາງ ແຜນຄຸ້ມຄອງ ແລະ ຟື້ນຟູຂັ້ນບ້ານ, ພາລະບົດບາດຂອງຈຸງານກະສິກຳ ແລະ ປ່າໄມ້, ໜ່ວຍງານເສດຖະກິດ-ການເງິນບ້ານໃນການຄຸ້ມຄອງປ່າສະຫງວນ, ການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດໃຫ້ຫຍັງແນ່?, ຄວາມສະເໝີພາບ ຍິງ-ຊາຍໃນວຽກງານກະສິກຳ, ປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ. ຫົວຂໍ້ເຫຼົ່ານີ້ແມ່ນມີຄວາມແທດເໝາະກັບສະພາບຄວາມເປັນຈິງຂອງບ້ານຫຼາຍ ເນື່ອງຈາກວ່າບ້ານເອງມີຄວາມຕ້ອງການຢາກປົກປັກຮັກສາປ່າໄມ້ ແລະ ຄວາມຮູ້ດ້ານກົດໝາຍທີ່ກ່ຽວຂ້ອງແມ່ນຊາວບ້ານສາມາດນຳໃຊ້ໃຫ້ເກີດຜົນປະໂຫຍດພາຍໃນບ້ານເຊັ່ນ:

- ນຳພາໃຫ້ເກີດແນວຄວາມຄິດໃນການສ້າງຕັ້ງໜ່ວຍງານປ່າໄມ້ບ້ານຢ່າງເປັນທາງການ: ບ້ານຫ້ວຍຊາຍຍັງບໍ່ທັນມີການສ້າງຕັ້ງໜ່ວຍງານປ່າໄມ້ບ້ານຢ່າງເປັນທາງການ ມີແຕ່ການມອບໝາຍວຽກແບບປາກເປົ່າ ຊຶ່ງວ່າການເຮັດວຽກໃນການຕິດຕາມລາດຕະເວນປ່າໄມ້ແມ່ນອີງໃສ່ສະພາບເຫດການພາຍໃນບ້ານ ແລະ ເມືອງເປັນຫຼັກ ແຕ່ບໍ່ມີໜ້າວຽກປະຈຳ ແລະ ບໍ່ມີໜ້າວຽກ ແລະ ການແຕ່ງຕັ້ງທີ່ເປັນລາຍລັກອັກສອນຈາກ

ຂັ້ນບ້ານ ແລະ ຂັ້ນເມືອງ ເຮັດໃຫ້ການເຮັດວຽກຂອງໜ່ວຍງານປ່າໄມ້ບ້ານບໍ່ໄດ້ດຳເນີນຢ່າງເປັນປົກກະຕິ ແລະ ບໍ່ໄດ້ຮັບຜົນເທົ່າທີ່ຄວນ. ຫຼັງຈາກກິດຈະກຳຂອງອາສາສະໝັກທີ່ໄດ້ອະທິບາຍເຖິງຄວາມສຳຄັນຂອງປ່າໄມ້ ແລະ ພາລະບົດບາດຂອງປ່າໄມ້ບ້ານ ເຮັດໃຫ້ອຳນາດການປົກຄອງບ້ານເຫັນຄວາມສຳຄັນໃນການປົກປັກຮັກສາປ່າໄມ້ ແລະ ຕ້ອງການສ້າງຕັ້ງຄະນະກຳມະການຄຸ້ມຄອງປ່າໄມ້ບ້ານຢ່າງເປັນທາງການ.

- ນຳພາໃຫ້ເກີດແນວຄວາມຄິດໃນການສ້າງລະບຽບໃນການປົກປັກຮັກສາປ່າໄມ້ຂັ້ນບ້ານ ແລະ ຂອບເຂດປ່າອະນຸລັກ: ຍ້ອນການເຜີຍແຜ່ກົດໝາຍປ່າໄມ້ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການວາງແຜນ ແລະ ການຟື້ນຟູປ່າໄມ້ຂັ້ນບ້ານ, ເຮັດໃຫ້ອຳນາດການປົກຄອງ ແລະ ປະຊາຊົນບ້ານຫ້ວຍຊາຍຕ້ອງການກຳນົດເອົາປ່າປ້ອງກັນພູຈອມທີ່ເປັນປ່າປ້ອງກັນແຫ່ງຊາດ ກຳນົດໃຫ້ເປັນປ່າປ້ອງກັນຂອງບ້ານນຳ ເພື່ອໃຫ້ຊາວບ້ານມີອຳນາດໃນການປົກປັກຮັກສາໄດ້ຢ່າງເຕັມທີ່. ບ້ານຕ້ອງການໃຫ້ມີລະບຽບຢ່າງເປັນທາງການສຳລັບບ້ານໃນການຄຸ້ມຄອງ ແລະ ປົກປັກຮັກສາ. ສຳລັບກົດລະບຽບໃນການຄຸ້ມຄອງປ່າໄມ້ບ້ານແມ່ນບໍ່ມີ ເຮັດໃຫ້ບ້ານໄດ້ນຳໃຊ້ກົດລະບຽບ ແລະ ລະບຽບຕ່າງໆ ຂອງເມືອງ ລວມທັງກົດໝາຍ, ດຳລັດ ແລະ ຄຳສັ່ງຕ່າງໆ ໃນການປົກປັກຮັກສາປ່າໄມ້. ບ້ານເຫັນວ່ານິຕິກຳດັ່ງກ່າວ ຍັງບໍ່ທັນພຽງພໍ ແລະ ບໍ່ເໝາະສົມກັບການຄຸ້ມຄອງຕົວຈິງຂອງບ້ານ, ຈິ່ງຕ້ອງການສ້າງກົດລະບຽບເປັນຂອງບ້ານເອງ ເພື່ອໃຫ້ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ມີຄວາມແທດເໝາະກັບສະພາບຕົວຈິງຂອງບ້ານຫຼາຍຂຶ້ນ.
- ມີການລາດຕະເວນປ່າໄມ້ຢ່າງເປັນປົກກະຕິ: ເມື່ອໄດ້ຮັບຄວາມຮູ້ດ້ານກົດໝາຍກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ ແລະ ການປົກປັກຮັກສາປ່າໄມ້ ເຮັດໃຫ້ບ້ານທີ່ເອົາໃຈໃສ່ໃນການປົກປັກຮັກສາຢູ່ແລ້ວ ຍິ່ງມີການຕື່ນຕົວໃນການອອກລາດຕະເວນປົກກະຕິຂຶ້ນ ເພື່ອສະກັດກັ້ນການລັກລອບຕັດໄມ້ຂາຍ. ໃນປີ 2022 ບ້ານຈັບຜູ້ກະທຳຜິດຕັດໄມ້ໃນປ່າປ້ອງກັນໄດ້ ພ້ອມທັງຢຶດຈັກສະຕິນ 2 ເຄື່ອງ ແລະ ໄມ້ຜິດກົດໝາຍຈຳນວນໜຶ່ງ. ບ້ານໄດ້ສົ່ງຜູ້ກະທຳຜິດ ແລະ ຂອງກາງທັງໝົດໃຫ້ເມືອງ ເພື່ອດຳເນີນຄະດີ.

## 6. ຜົນໄດ້ຮັບຈາກກິດຈະກຳຂອງອາສາສະໝັກ

ກິດຈະກຳຂອງອາສາສະໝັກແມ່ນສ້າງການປ່ຽນແປງທີ່ດີໃຫ້ກັບບ້ານໃນຮູບແບບການຄຸ້ມຄອງປ່າໄມ້. ໃນໄລຍະຜ່ານມາ, ເມື່ອເຮັດກິດຈະກຳການອະນຸລັກປ່າໄມ້ ເມືອງນຳພາບ້ານເຮັດກິດຈະກຳຕົວຈິງເຊັ່ນ: ສົ່ງເສີມການປູກໄມ້ໃນປ່າ ໂດຍບໍ່ມີການໃຫ້ຄວາມຮູ້ດ້ານກົດໝາຍທີ່ກ່ຽວຂ້ອງແກ່ປະຊາຊົນ. ຈາກການສຳພາດພະນັກງານຍຸຕິທຳເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໄດ້ໃຫ້ຄຳຄິດຄຳເຫັນວ່າ ກິດຈະກຳນີ້ແມ່ນມີຜົນປະໂຫຍດຫຼາຍສຳລັບປະຊາຊົນ ເພາະວ່າເປັນຄວາມຮູ້ທີ່ສາມາດນຳໃຊ້ໄດ້ ໂດຍເຮັດໃຫ້ເຂົາເຈົ້າມີຈິດສຳນຶກໃນການປົກປັກຮັກສາປ່າໄມ້ ແລະ ມີຄວາມລະມັດລະວັງຕໍ່ການນຳໃຊ້ສານເຄມີ ເພາະວ່າສານເຄມີບໍ່ພຽງແຕ່ທຳລາຍແຫຼ່ງນໍ້າ ແຕ່ເປັນອັນຕະລາຍຕໍ່ຕົວເຂົາເຈົ້າເອງ. ອີກຢ່າງໜຶ່ງການເຜີຍແຜ່ກົດໝາຍຂອງອາສາສະໝັກ ແມ່ນເປັນວິທີທີ່ເຂົ້າໃຈງ່າຍ ແລະ ມີບັນຍາກາດ ໂດຍການນຳໃຊ້ໂພດເຕີ ແລະ ວິດີໂອ ເປັນເຄື່ອງມືທີ່ສາມາດນຳໃຊ້ໄດ້ຕະຫຼອດອີງໃສ່ຄວາມເໝາະສົມຂອງພື້ນທີ່ ເພາະວ່າວິດີໂອອາດຈະບໍ່ເໝາະສົມກັບບ້ານທີ່ບໍ່ມີໄຟຟ້າ ແລະ ສະພາບເສັ້ນທາງທີ່ຫຍຸ້ງຍາກ ແຕ່ວ່າໂພສເຕີແມ່ນເໝາະສົມກັບທຸກສະພາບພື້ນທີ່ ແລະ ສາມາດນຳໃຊ້ໄດ້ຕະຫຼອດ. ພ້ອມກັນນັ້ນ ທ່ານ ນາງ ມີນາ ຈາກຫ້ອງການ ຍຸຕິທຳເມືອງຍັງກ່າວວ່າ: "ຂ້າພະເຈົ້າມີຄວາມຈື່ຈຳບົດຮຽນຈາກກິດຈະກຳຂອງອາສາສະໝັກໄດ້ເປັນຢ່າງດີ ແລະ ສາມາດນຳໃຊ້ຢູ່ບ້ານອື່ນໄດ້, ແຕ່ຜ່ານມາຍັງບໍ່ທັນມີງົບປະມານໃນການລົງເຜີຍແຜ່ຂໍ້ມູນຢູ່ບ້ານອື່ນ, ແຕ່ເມື່ອມີໂອກາດໄປເຮັດວຽກອື່ນທີ່ກ່ຽວຂ້ອງ ຂ້າພະເຈົ້າກໍໃຊ້ໂອກາດໃນການໃຫ້ຄວາມຮູ້ແກ່ຊາວບ້ານເລື່ອງການຮັກສາແຫຼ່ງນໍ້າ ແລະ ຊັບພະຍາກອນທຳມະຊາດໄປນຳ".

ບ້ານເຫັນວ່າກິດຈະກຳຂອງອາສາສະໝັກ ແມ່ນມີຄວາມແຕກຕ່າງ ແລະ ມີຄວາມສຳຄັນຫຼາຍ ເພາະວ່າບ້ານໄດ້ເຂົ້າໃຈກົດໝາຍ ແລະ ມີເອກະສານກົດໝາຍ ເພື່ອນຳໄປເຜີຍແຜ່ໃຫ້ປະຊາຊົນຢ່າງຕໍ່ເນື່ອງ. ນາຍບ້ານຫ້ວຍຊາຍ

ເວົ້າວ່າ: “ບ້ານໄດ້ເອົາເອກະສານບົດຮຽນທີ່ທາງອາສາສະໝັກ ແລະ ໂຄງການມອບໃຫ້ໄປເຜີຍແຜ່ ແລະ ທົບທວນໃຫ້ປະຊາຊົນຟັງ ເພື່ອເຕືອນສະຕິຂອງເຂົາເຈົ້າໃນການນຳໃຊ້ສານເຄມີ ແລະ ການບຸກລຸກປ່າໄມ້.”

ຈາກກິດຈະກຳຂອງໄວໜຸ່ມ ທີ່ເນັ້ນໃສ່ການມີສ່ວນຮ່ວມຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ ເຫັນວ່າບ້ານໄດ້ໃຫ້ຄວາມສຳຄັນແກ່ແມ່ຍິງໃນການມີສ່ວນຮ່ວມປຶກສາຫາລືເວລາມີກິດຈະກຳໃນການຄຸ້ມຄອງປ່າໄມ້ ແລະ ໃຫ້ແມ່ຍິງເຂົ້າຮ່ວມເວລາມີການເຜີຍກົດລະບຽບຂອງເມືອງ ແລະ ນິຕິກຳຕ່າງໆ. ມີການປຸກລະດົມໃຫ້ແມ່ຍິງທຸກຄົນເປັນເຈົ້າການຊ່ວຍກັນໃນການປະຕິບັດລະບຽບຂອງການປົກປັກຮັກສາປ່າໄມ້ ໃຫ້ເຄັ່ງຄັດ ເພື່ອບໍ່ໃຫ້ມີການບຸກລຸກປ່າໄມ້. ເຜີຍແຜ່ຂໍ້ມູນກ່ຽວກັບການຫ້າມເຮັດສວນໃນເຂດປ່າໄມ້ ໂດຍສະເພາະການເຮັດສວນກາເຟໃນເຂດປ່າໄມ້ບ້ານແມ່ນບໍ່ຢາກໃຫ້ເຮັດອີກ. ແມ່ຍິງມີຄວາມເຂົ້າໃຈຫຼາຍໃນການປົກປັກຮັກສາປ່າໄມ້ ໂດຍແມ່ຍິງຢາກໃຫ້ທາງນາຍບ້ານສ້າງກົດລະບຽບເຄັ່ງຄັດບໍ່ໃຫ້ມີການເຮັດສວນຢ່າງເດັດຂາດຢາກໃຫ້ໄປກວດເຂດປ່າໄມ້ທີ່ຖືກບຸກລຸກ ຖ້າໃຜຍັງເຮັດແມ່ນນຳມາກ່າວເຕືອນ ຫຼື ປັບໄໝ ແລະ ສ້າງມາດຕະການຕໍ່ຜູ້ກະທຳຜິດໃຫ້ໄດ້ຮັບໂທດຕາມລະບຽບກົດໝາຍ (ອີງໃສ່ການສຳພາດກຸ່ມຍິງບ້ານຫ້ວຍຊາຍ).

ພ້ອມກັນນັ້ນ, ກິດຈະກຳຂອງໄວໜຸ່ມຍັງເຮັດໃຫ້ແມ່ຍິງ ແລະ ປະຊາຊົນພາຍໃນບ້ານເຫັນຄວາມສຳຄັນຂອງປ່າໄມ້ ມີຄວາມຄິດຢາກປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ເພື່ອໃຫ້ປ່າໄມ້ອຸດົມສົມບູນຂຽວງາມ ແມ່ຍິງໃນບ້ານພ້ອມໃຈກັນ, ຮ່ວມມືກັນໃນການປົກປັກຮັກສາປ່າໄມ້ ເພື່ອໃຫ້ມີການນຳໃຊ້ແບບຍືນຍົງເພື່ອອະນາຄົດຂອງລູກຫຼານ. ຜູ້ທີ່ເຂົ້າຮ່ວມກິດຈະກຳໄວໜຸ່ມໄດ້ມີການເຜີຍແຜ່ຄວາມຮູ້ ແລະ ຂໍ້ມູນດ້ານກົດໝາຍໃຫ້ກັບສະມາຊິກໃນຄອບຄົວ ແລະ ເຮືອນໃກ້ຄຽງ. ນາງ ເພັດຕຸລາ, ປະຊາຊົນບ້ານຫ້ວຍຊາຍເວົ້າວ່າ “ບົດຮຽນຈາກການຝຶກອົບຮົມແມ່ນດີຫຼາຍ ເພື່ອເປັນສິ່ງເຕືອນໃຈໃຫ້ກັບປະຊາຊົນໃນການຮັກສາທຳມະຊາດ ແລະ ຄວາມປອດໄພຂອງປະຊາຊົນເອງໂດຍສະເພາະການປ້ອງກັນຕົນເອງຈາກການນໍໃຊ້ສານເຄມີ. ເຂົ້າໃຈຫຼາຍຂຶ້ນວ່າຜົນກະທົບຈາກສານເຄມີ ເຖິງແມ່ນວ່າຈະບໍ່ເກີດໃນປັດຈຸບັນແຕ່ມັນຈະຄ່ອຍໆ ສະສົມ ແລະ ຮຸນແຮງຫຼາຍຂຶ້ນຫາກເຮົາບໍ່ມີການປ້ອງກັນ ຫຼື ຊອກຫາວິທີທາງໃນການຫຼຸດຜ່ອນ”.

ສຳລັບກຸ່ມຊາຍກໍໃຫ້ຄຳເຫັນວ່າ ເປັນຄວາມຮູ້ທີ່ດີຫຼາຍສຳລັບແຕ່ລະຄອບຄົວ ແລະ ປະຊາຊົນໃນການຟື້ນຟູປ່າໄມ້, ການປົກປັກຮັກສາປ່າໄມ້ ແລະ ເປັນການຊ່ວຍຊຸກຍູ້ຊຸມຊົນໃຫ້ມີການຮ່ວມມືກັນ ໃນການຮັກສາປ່າໄມ້ ແລະ ສິ່ງແວດລ້ອມ. ພ້ອມກັນນັ້ນ, ຜູ້ຊາຍໄດ້ຊ່ວຍກັນເປັນຫູເປັນຕາໃນການຕິດຕາມປ່າໄມ້ ແລະ ໜ່ວຍງານທີ່ກ່ຽວຂ້ອງກໍເອົາໃຈໃສ່ໃນການລາດຕະເວນເພີ່ມຂຶ້ນ. ປະຊາຊົນມີຄວາມກະຕືລືລົ້ນໃນການປູກປ່າ ເພື່ອຟື້ນຟູປ່າໄມ້ທຳມະຊາດ. “ຂ້າພະເຈົ້າມີຄວາມເຫັນດີໃນການສ້າງປ່າປ້ອງກັນຂອງບ້ານ ແຕ່ຕ້ອງມີການກຳນົດເຂດທີ່ໄກຈາກສວນ ຫຼື ເຂດທຳການຜະລິດຂອງປະຊາຊົນເພື່ອເຮັດໃຫ້ເຂົາເຈົ້າຮ່ວມມືໃນການປົກປັກຮັກສາ” ຄຳເວົ້າຂອງທ້າວແສນ ບ້ານຫ້ວຍຊາຍ. ຄົນໃນບ້ານເຂົ້າໃຈຜົນຮ້າຍຂອງຢາຂ້າຫຍ້າ ເພາະວ່າມີຜົນກະທົບຕໍ່ສຸຂະພາບຂອງຜູ້ທີ່ໃຊ້ເຊັ່ນກັນ. ສະນັ້ນ ມີຫຼາຍຄອບຄົວທີ່ຢຸດເຊົາການໃຊ້ສານເຄມີໃນສວນຂອງຕົນເອງເພື່ອຫຼີກລ້ຽງບັນຫາສິ່ງແວດລ້ອມ ແລະ ຮັກສາສຸຂະພາບຂອງເຂົາເຈົ້າເອງ. ຍ້ອນກິດຈະກຳຂອງໄວໜຸ່ມໄດ້ສ້າງຄວາມເຂົ້າໃຈໃຫ້ອຳນາດການປົກຄອງບ້ານ ແລະ ປະຊາຊົນເຫັນຄວາມສຳຄັນຂອງການປົກປັກຮັກສາປ່າໄມ້, ຈຶ່ງໃຫ້ຊາວບ້ານຕ້ອງການສ້າງນະໂຍບາຍປ່າປ້ອງກັນຂອງບ້ານຂຶ້ນ. ປະຊາຊົນໃນບ້ານມີຄວາມເຂົ້າໃຈດີ ຍ້ອນວ່າການປະຕິບັດກິດຈະກຳຂອງອາສາສະໝັກແຕ່ລະຄັ້ງແມ່ນມີຄວາມຕໍ່ເນື່ອງກັນໂດຍເລີ່ມຈາກການວິເຄາະບັນຫາ ຈົນຮອດການແກ້ໄຂບັນຫາ ເຊິ່ງເປັນກິດຈະກຳສຸດທ້າຍ ໂດຍແຜນວາດດັ່ງນີ້:

**ຂັ້ນຕອນທີ 1:** ລົງບ້ານຄັ້ງທີ 1: ເກັບກຳຂໍ້ມູນກ່ຽວກັບບັນຫາທີ່ເກີດຂຶ້ນໃນບ້ານ. ຫຼັງຈາກເກັບກຳຂໍ້ມູນແລ້ວໄດ້ມີການວິເຄາະຂໍ້ມູນເພື່ອຄັດເລືອກຫົວຂໍ້ ແລະ ມາດຕາກົດໝາຍທີ່ ເໝາະສົມກັບຄວາມຕ້ອງການຂອງຊາວບ້ານ

**ຂັ້ນຕອນທີ 2:** ອອກແບບການຝຶກອົບຮົມ ແລະ ພັດທະນາຫຼັກສູດ ໂດຍການມີສ່ວນຮ່ວມຂອງອາສາສະໝັກ ແລະ ທີມຄູຝຶກໂຄງການ. ຮູບແບບການຝຶກອົບຮົມແມ່ນເນັ້ນໃສ່ການນຳໃຊ້ອຸປະກອນ ແລະ ເຄື່ອງມືທີ່ມີລັກສະນະສ້າງສັນເຂົ້າໃຈງ່າຍເຊັ່ນ: ໂພດເຕີ, ເກມ, ບົດບາດສົມມຸດ, ວິດີໂອ ແລະ ອື່ນໆ

**ຂັ້ນນຕອນທີ 3:** ລົງບ້ານຄັ້ງທີ 2: ປູກຈິດສຳນຶກໃຫ້ຊາວບ້ານກ່ຽວກັບການການອະນຸລັກປ່າໄມ້ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຜົນກະທົບຈາກການນຳໃຊ້ສານເຄມີ. ພ້ອມກັນນັ້ນກໍໄດ້ປຶກສາຫາລືກັບບ້ານຕື່ມອີກກ່ຽວກັບບັນຫາບຸລິມະສິດທີ່ຊາວບ້ານຕ້ອງການແກ້ໄຂ.

**ຂັ້ນຕອນທີ 4:** ລົງບ້ານຄັ້ງທີ 3: ຝຶກອົບຮົມໃຫ້ອຳນາດການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງກ່ຽວກັບຄຸນປະໂຫຍດຂອງປ່າໄມ້, ການຄຸ້ມຄອງ ແລະ ຟື້ນຟູປ່າໄມ້ແບບມີສ່ວນຮ່ວມ, ພາລະບົດບາດຂອງຈຸງານປ່າໄມ້ບ້ານໃນການຄຸ້ມຄອງປ່າໄມ້ ແລະ ຫົວຂໍ້ອື່ນໆ ທີ່ກ່ຽວຂ້ອງ.

**ຂັ້ນຕອນທີ 5:** ລົງບ້ານຄັ້ງທີ 4: ສ້າງປ່າປ້ອງກັນຂອງບ້ານຫ້ວຍຊາຍ ໂດຍມີລະບຽບຮັບຮອງຈາກເຈົ້າເມືອງ (ບາງເນື້ອໃນທີ່ສຳຄັນຂອງກົດລະບຽບ ເບິ່ງຢູ່ພາກຜົນໄດ້ຮັບຂອງເອກະສານສະບັບນີ້). ເນື້ອທີ່ປ່າປ້ອງກັນຂອງບ້ານແມ່ນໄດ້ມີການວັດແທກແລ້ວເນື່ອງຈາກວ່ານອນໃນເຂດປ່າປ້ອງກັນແຫ່ງຊາດ ທີ່ໄດ້ຮັບການວັດແທກຈາກພາກສ່ວນທີ່ກ່ຽວ ຂ້ອງໃນການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ແຕ່ບໍ່ໄດ້ສ້າງກົດລະບຽບຂັ້ນບ້ານ. ສະນັ້ນ, ຊາວບ້ານຈຶ່ງສະເໜີໃຫ້ສະໜັບສະໜູນສ້າງກົດລະບຽບຢູ່ຂັ້ນບ້ານ.

ຍ້ອນກິດຈະກຳຂອງອາສາສະໝັກມີການວາງແຜນທີ່ລະອຽດ, ການວິເຄາະບັນຫາ ແລະ ຄັດເລືອກກິດຈະກຳໃນການແກ້ໄຂບັນຫາແມ່ນຖືກຕ້ອງຕາມຄວາມຕ້ອງການຂອງຊາວບ້ານ ແລະ ອຳນາດການປົກຄອງບ້ານ ຈຶ່ງເຮັດໃຫ້ເຂົາເຈົ້າມີຄວາມກະຕືລືລົ້ນໃນການແກ້ໃນການມີສ່ວນຮ່ວມສ້າງປ່າປ້ອງກັນຂອງບ້ານ. ອີກຢ່າງໜຶ່ງຊາວບ້ານກໍພູມໃຈທີ່ເຫັນໄວໜຸ່ມບ້ານຂອງຕົນນຳເອົາກິດຈະກຳດີໆ ແບບນີ້ມາ ແລະ ສ້າງຜົນປະໂຫຍດໃຫ້ບ້ານເກີດຂອງຕົນ.



ຮູບທີ 9: ການແຕ້ມແຜນວາດປ່າໄມ້ບ້ານຂອງກຸ່ມຊາຍ

**6. ບົດຮຽນທີ່ຖອດຖອນໄດ້/ຂໍ້ແນະນຳສຳລັບອະນາຄົດ**

**ລະດັບນັກຮຽນ:**

ນັກສຶກສາທີ່ດຳເນີນກິດຈະກຳນີ້ ກໍຄືປິ່ງຄຳ ມີຄວາມພູມໃຈຫຼາຍທີ່ໄດ້ເອົາຄວາມຮູ້ດ້ານກົດໝາຍກົດໝາຍທີ່ໂຕເອງຮຽນມາ ແລະ ຄວາມຮູ້ຈາກໂຄງການ ມາເຜີຍແຜ່ໃຫ້ປະຊາຊົນບ້ານຂອງຕົນເອງ. ເປັນກິດຈະກຳທີ່ນັກສຶກສາມັກ ແລະ ມີຄວາມຕື່ນເຕັ້ນໃນການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ຄວາມຮູ້ດ້ານກົດໝາຍໃຫ້ພໍ່ແມ່ປະຊາຊົນ. ເປັນຄັ້ງທຳອິດທີ່ມີໂອກາດໄດ້ເຜີຍແຜ່ກົດໝາຍດ້ວຍຕົນເອງ ໂດຍໄດ້ມີການກະກຽມຄວາມພ້ອມຕ່າງໆ ນັບແຕ່ການກະກຽມອຸປະກອນ, ເຄື່ອງມື, ເນື້ອໃນກົດໝາຍ, ການປະສານງານກັບອຳນາດການປົກຄອງບ້ານ ແລະ ການກະກຽມຕົນເອງ ແລະ ໝູ່ຢູ່ບ້ານທີ່ຊ່ວຍໃນການເຮັດກິດຈະກຳ. ປິ່ງຄຳເລົ່າວ່າ: ເປັນປະສົບການທີ່ດີຫຼາຍ ທີ່ບໍ່ເຄີຍໄດ້ຈາກໃສມາກ່ອນ ເພາະວ່າໄດ້ລອງເຮັດທຸກສິ່ງທຸກຢ່າງດ້ວຍຕົນເອງຄືກັນກັບການເປັນພະນັກງານຜູ້ໜຶ່ງ ການເຂົ້າຮ່ວມກິດຈະກຳຂອງໂຄງການ ແລະ ການເຮັດກິດຈະກຳຢູ່ບ້ານ ໄດ້ເຮັດໃຫ້ຕົນເອງມີຄວາມໝັ້ນໃຈໃນການນຳພາກິດຈະກຳ ຊຶ່ງແຕກຕ່າງຈາກເມື່ອກ່ອນທີ່ເປັນຄົນຂີ້ອາຍ, ບໍ່ກ້າສະແດງອອກ ແລະ ບໍ່ມີທັກສະໃນການເປັນຜູ້ອຳນວຍຄວາມສະດວກ. ນອກຈາກນັ້ນ, ປິ່ງຄຳ ຍັງມີຄວາມສະໜິດສະໜົມກັບອຳນາດການປົກຄອງບ້ານຫຼາຍກວ່າແຕ່ກ່ອນ ຍ້ອນມີການປະສານງານກັນເລື່ອງກິດຈະກຳ ແລະ ອຳນາດການປົກຄອງບ້ານກໍໃຫ້ກຽດ ແລະ ໃຫ້ການຮ່ວມມືເປັນຢ່າງດີ. ເຮັດໃຫ້ປິ່ງຄຳພູມໃຈຫຼາຍທີ່ໄດ້ເປັນສ່ວນໜຶ່ງໃນການປະກອບສ່ວນໃຫ້ຄວາມຮູ້ແກ່ປະຊາຊົນເພື່ອການອະນຸລັກຮັກສາຊັບພະຍາກອນທຳມະຊາດ, ປ່າໄມ້ ແລະ ແຫຼ່ງນ້ຳໃຫ້ມີຄວາມຍືນຍົງ. ຍິ່ງໄປກວ່ານັ້ນ ອາສາສະໝັກ ຍັງໄດ້ເຂົ້າໃຈກ່ຽວກັບຄວາມສຳຄັນຂອງການອະນຸລັກປົກປັກຮັກສາປ່າໄມ້ຂັ້ນບ້ານ ເພື່ອເປັນແຫຼ່ງອາຫານຂອງປະຊາຊົນພາຍໃນບ້ານ. ໃນອະນາຄົດ ອາສາສະໝັກສາມາດປະສານງານກັບບ້ານໃນການໃຫ້ຄວາມຮູ້ດ້ານກົດໝາຍຕ່າງໆ ພ້ອມກັນນັ້ນກໍສາມາດໃຫ້ຄຳແນະນຳ ແລະ ຄຳປຶກສາແກ່ບ້ານໄດ້ກ່ຽວກັບການຄຸ້ມຄອງປ່າໄມ້ ຫຼື ເວລາທີ່ມີບັນຫາເກີດຂຶ້ນໃນບ້ານ. ອາສາສະໝັກສາມາດຂໍຄຳປຶກສາຈາກໂຄງການໄດ້ຕະຫຼອດເວລາ ຖ້າວ່າມີຄຳຖາມ ຫຼື ບໍ່ໝັ້ນໃຈໃນການຕອບຄຳຖາມຂອງຊາວບ້ານ.

**ຮູບທີ 10: ນາງປິ່ງຄຳ ສີວິໄລ ອາສາສະໝັກໂຄງການ (ບ້ານຫ້ວຍຊາຍ)**



**ລະດັບບ້ານ:**

ຄືດັ່ງທີ່ໄດ້ກ່າວມາຂ້າງເທິງກິດຈະກຳຂອງໂຄງການມີຄວາມສຳຄັນຫຼາຍໃຫ້ກັບຊາວບ້ານ ເປັນກິດຈະກຳທີ່ເຮັດປະຊຸມພາກພູມໃຈທີ່ມີໄວໜຸ່ມຂອງບ້ານເອົາຄວາມຮູ້ມາໃຫ້ປະຊາຊົນພາຍໃນບ້ານ ແລະ ປະຊາຊົນກໍມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບການອະນຸລັກແຫຼ່ງນ້ຳ ແລະ ປ່າໄມ້. ໂດຍສະເພາະບ້ານຫ້ວຍຊາຍແມ່ນຕ້ອງການສ້າງປ່າປ້ອງກັນຂອງບ້ານ ຊຶ່ງເມື່ອກ່ອນກໍເຄີຍຄິດ ແຕ່ບໍ່ມີໃຜມາໃຫ້ຄວາມຮູ້ກ່ຽວກັບການສ້າງຕັ້ງປ່າໄມ້ບ້ານ ຫຼື ປ່າປ້ອງກັນຂັ້ນບ້ານ ເມື່ອຮູ້ວ່າມີລະບຽບກົດໝາຍມາສະໜັບສະໜູນກໍຍິ່ງມີຄວາມຕ້ອງການສ້າງປ່າປ້ອງກັນຂອງບ້ານຢ່າງເປັນທາງການ ເພື່ອໃຫ້ການຄຸ້ມຄອງມີຄວາມເໝາະສົມ ແລະ ຊັດເຈນ. ການຮຽນຮູ້ຈາກອາສາສະໝັກກໍເຂົ້າໃຈງ່າຍ ແລະ ຈື່ງ່າຍ ເພາະວ່າເນັ້ນໃສ່ການອະທິບາຍທີ່ມີຮູບພາບ ແລະ ວິດີໂອ. ໃນບ້ານກໍມີຍິງໜຸ່ມ ແລະ ຊາຍໜຸ່ມ ທີ່ກ້າສະແດງອອກ ແລະ ສາມາດອະທິບາຍກົດໝາຍໃຫ້ປະຊາຊົນໄດ້ ໂດຍການນໍາໃຊ້ໂພສເຕີຂອງໂຄງການ ຊຶ່ງວ່າເປັນບົດຮຽນໃໝ່ ທີ່ເກີດຂຶ້ນໃນບ້ານ. ສຳລັບການສ້າງຕັ້ງປ່າປ້ອງກັນຂອງບ້ານ ອຳນາດປົກຄອງບ້ານໄດ້ພະຍາຍາມຂໍຄວາມຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງໃນການນຳພາສ້າງປ່າປ້ອງກັນຂອງບ້ານ ໂດຍສະເພາະຢາກໃຫ້ອາສາສະໝັກ ແລະ ທີມງານໂຄງການໄລຟ໌ ມາຊ່ວຍຈົນສຳເລັດ. ສຳລັບຄວາມຮູ້ດ້ານກົດໝາຍອຳນາດການປົກຄອງບ້ານໄດ້ເຜີຍແຜ່ໃຫ້ກັບປະຊຸມ ແລະ ຈະສືບຕໍ່ປະຕິບັດຕະຫຼອດໄປ ເພື່ອໃຫ້ຄວາມຮູ້ຢູ່ກັບປະຊາຊົນ ແລະ ສືບຕໍ່ການຕິດຕາມລາດຕະເວນປ່າໄມ້ ເພື່ອບໍ່ໃຫ້ມີການບຸກລຸກປ່າປ້ອງກັນ.

ບ້ານໄດ້ສຳເລັດການສ້າງລະບຽບຄຸ້ມຄອງປ່າປ້ອງກັນພູຈອມຢ່າງເປັນທາງການໃນເດືອນ ມິຖຸນາ, ປີ 2024, ລະບຽບນີ້ສາມາດນຳໃຊ້ເປັນບ່ອນອີງໃນການປົກປັກຮັກສາປ່າໄມ້ພາຍໃນບ້ານຫ້ວຍຊາຍ. ລະບຽບໄດ້ລະບຸພາລະບົດບາດຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງຢ່າງຊັດເຈນ ຊຶ່ງຈະຊ່ວຍໃຫ້ການຄຸ້ມຄອງ ແລະ ປົກປັກຮັກສາປ່າປ້ອງກັນໄດ້ຢ່າງເຄັ່ງຄັດ. ຄະນະຄຸ້ມຄອງປ່າປ້ອງກັນພູຈອມຈະຕ້ອງໄດ້ປະຊຸມກັບປະຊາຊົນເພື່ອເຜີຍ ແຜ່ກົດລະບຽບ ແລະ ສະຫຼຸບລາຍງານຜົນຂອງການຄຸ້ມຄອງປ່າປ້ອງກັນພູຈອມຢ່າງໜ້ອຍ 2 ຄັ້ງ/ປີ. ພ້ອມກັນນັ້ນໜ່ວຍງານລາດຕະເວນປ່າປ້ອງກັນ ກໍຍັງໄດ້ຕິດຕາມ, ກວດກາ ແລະ ລາດຕະເວນຄວາມເປັນລະບຽບຮຽບຮ້ອຍທຸກໆ 3 ເດືອນ ຫຼື 4 ຄັ້ງ/ປີ. ການປະຕິບັດພາລະບົດບາດດັ່ງກ່າວນີ້ຈະເຮັດໃຫ້ການປົກປັກປ່າໄມ້ຂອງບ້ານມີຄວາມເຂັ້ມແຂງ. ບາງຕອນຂອງກົດລະບຽບໄດ້ລະບຸໄວ້ຢ່າງເຂັ້ມງວດດັ່ງນີ້:

ຂໍ້ຫ້າມ:

1. ຫ້າມທຸກໆ ຄົນພາຍໃນບ້ານ ແລະ ນອກບ້ານເຂົ້າໄປຕັດໄມ້, ການໄມ້ ຫຼື ໃຊ້ສານເຄມີ ເຮັດໃຫ້ຕົ້ນໄມ້ຕາຍ, ບຸກເບີກປ່າ, ຖາງປ່າ, ຈູດປ່າ ແລະ ທຳການຜະລິດກະສິກຳ (ເຊັ່ນ: ສວນກາເຟເຢັນ, ສວນໝາກແໜ່ງ, ແຂມ ແລະ ຄັງສັດ) ໃນຂອບເຂດປ່າປ້ອງກັນພູຈອມ (ໃນເຂດຄຸ້ມຄອງຂອງບ້ານຫ້ວຍຊາຍ) ຢ່າງເດັດຂາດ;

2. ຫ້າມທຸກໆ ຄົນພາຍໃນບ້ານ ແລະ ນອກບ້ານທຳລາຍ ແລະ ລ່າສັດປ່າທຸກຊະນິດ (ດ້ວຍການໃຊ້ອຸປະກອນ ລ່າສັດທຸກຊະນິດ) ໃນຂອບເຂດປ່າປ້ອງກັນພູຈອມ (ໃນເຂດຄຸ້ມຄອງຂອງບ້ານ ຫ້ວຍຊາຍ) ຢ່າງເດັດຂາດ;

3. ຫ້າມທຸກໆ ຄົນພາຍໃນບ້ານ ແລະ ນອກບ້ານເກັບເຄື່ອງປ່າຂອງດົງປະເພດຫວງຫ້າມ (ເຊັ່ນ: ຈຳພອກຫວາຍ, ດອກກ້ວຍໄມ້, ເຄືອແຫມ ແລະ ອື່ນໆ) ແລະ ໄມ້ຟືນໃນຂອບເຂດປ່າປ້ອງກັນພູຈອມ (ໃນເຂດຄຸ້ມຄອງຂອງບ້ານຫ້ວຍຊາຍ) ຢ່າງເດັດຂາດ;

4. ຫ້າມທຸກໆ ຄົນພາຍໃນ ແລະ ນອກບ້ານ ຈັບຈອງ, ເຊົ່າ ຫຼື ສຳປະທານ ທີ່ດິນເຂດປ່າປ້ອງກັນພູຈອມ (ໃນ ເຂດຄຸ້ມຄອງຂອງບ້ານຫ້ວຍຊາຍ) ຢ່າງເດັດຂາດ.

ມາດຕະການຕໍ່ຜູ້ລະເມີດ: 1. ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຫາກມີການລະເມີດໃນການຈັບຈອງທີ່ດິນປ່າໄມ້, ຕັດໄມ້, ທຳລາຍປ່າ, ຈູດປ່າ, ການໄມ້ ຫຼື ໃຊ້ສານເຄມີ ເຮັດໃຫ້ຕົ້ນໄມ້ຕາຍ, ບຸກເບີກປ່າ, ຖາງປ່າ ແລະ ທຳການຜະລິດກະສິກຳ (ເຊັ່ນ: ສວນກາເຟເຢັນ, ສວນໝາກແໜ່ງ, ແຂມ ແລະ ຄັງສັດ) ພາຍໃນປ່າປ້ອງກັນ ພູຈອມ (ໃນເຂດຄຸ້ມຄອງຂອງບ້ານ ຫ້ວຍຊາຍ) ແມ່ນຈະຖືກປະຕິບັດມາດຕະການດັ່ງນີ້:

ຄັ້ງທີ 1: ສ້າງບົດບັນທຶກພ້ອມສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍໂດຍອີງໃສ່ການປະເມີນມູນຄ່າຕົວຈິງ ແລະ ຍຶດອຸປະກອນທັງໝົດທີ່ນຳໃຊ້ເປັນຂອງກາງ ແລະ ຢຸດເຊົາທັນທີ;

ຄັ້ງທີ 2: ຈະຖືກປັບໃໝເປັນເງິນຈຳນວນ 3,000,000 ກີບ (ສາມລ້ານກີບຖ້ວນ) ຕໍ່ຄັ້ງ ແລະ ໃຊ້ແທນຄ່າເສຍຫາຍ ໂດຍອີງໃສ່ການປະເມີນມູນຄ່າຕົວຈິງ ສອງເທົ່າ, ພ້ອມທັງຍຶດອຸປະກອນທັງໝົດເປັນຂອງກາງ, ຢຸດເຊົາທັນທີ, ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ສຶກສາອົບຮົມ;

ຄັ້ງທີ 3: ຈະຖືກປັບໃໝ 5 ເທົ່າຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ລວມທັງຊັບພະຍາກອນປ່າໄມ້ ຕາມລາຄາຕະຫຼາດ ພ້ອມສົ່ງໃຫ້ເຈົ້າໜ້າທີ່ໆ ກ່ຽວຂ້ອງດຳເນີນການແກ້ໄຂຕາມຂະບວນການຍຸຕິທຳ.

ຮູບທີ 11: ແຜນທີ່ປ່າປ້ອງກັນພູຈອມ ເຂດຄຸ້ມຄອງຂອງບ້ານຫ້ວຊາຍ ເມືອງທ່າແຕງ ແຂວງເຊກອງ



**ລະດັບເມືອງ**

ພະນັກງານເມືອງແມ່ນເຫັນຄວາມສຳຄັນກິດຈະກຳຂອງໄວໜຸ່ມຫຼາຍເນື່ອງຈາກວ່າມີຄວາມພິເສດທີ່ແຕກຕ່າງຈາກກິດຈະກຳອື່ນໆ ແລະ ບໍ່ເຄີຍມີກິດຈະກຳໄວໜຸ່ມທີ່ນຳພາປະຊາຊົນແບບນີ້. ຜ່ານມາພະນັກງານຂັ້ນເມືອງເຄີຍເຂົ້າຮ່ວມຫຼາຍໂຄງການ ແຕ່ເນັ້ນໃສ່ການບັນຍາຍໂດຍການອ່ານເອກະສານ ຊຶ່ງວ່າກິດຈະກຳຂອງອາສາສະໝັກແມ່ນມີຄວາມແຕກຕ່າງ ທີ່ສ້າງປະສົບການໃໝ່ໃຫ້ກັບພະນັກງານເມືອງ ແລະ ປະຊາຊົນ ຊຶ່ງສາມາດຈື່ຈຳໄດ້ງ່າຍ ແລະ ສາມາດນຳເອົາໄປເຜີຍແຜ່ຕໍ່ໄດ້. ກິດຈະກຳຂອງອາສາສະໝັກໄວໜຸ່ມ ຍັງເປັນການສົ່ງເສີມວຽກງານຄຸ້ມຄອງປ່າໄມ້ຂອງເມືອງ ເນື່ອງຈາກວ່າເມືອງມີເປົ້າໝາຍໃນການຮັກສາປ່າໄມ້ຂອງບ້ານຫ້ວຍຊາຍ ໂດຍສະເພາະແມ່ນປ່າປ້ອງກັນພູຕາຢືນ ແລະ ປ່າປ້ອງກັນພູຈອມ ຊຶ່ງດົນໆ ຈະມີກິດຈະກຳປູກຕົ້ນໄມ້ໃນປ່າ ແລະ ເຜີຍແຜ່ກົດລະບຽບຂອງເມືອງ ເພື່ອສ້າງຈິດສຳນຶກໃຫ້ປະຊາຊົນໃນການອະນຸລັກປ່າໄມ້. ສະນັ້ນ, ກິດຈະກຳຂອງອາສະໝັກແມ່ນປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງປ່າໄມ້ຂອງເມືອງໄດ້ເປັນຢ່າງດີ ເປັນອີກກິດຈະກຳທີ່ຊ່ວຍໃຫ້ວຽກງານອະນຸລັກປ່າໄມ້ຂອງບ້ານຫ້ວຍຊາຍມີປະສິດທິພາບ ແລະ ໄດ້ຮັບຜົນດີຍິ່ງຂຶ້ນ.

ຫຼັງຈາກກິດຈະກຳຄັ້ງທີ 3 ຂອງອາສາສະໝັກ, ພະນັກງານເມືອງໄດ້ວາງແຜນໃນການສ້າງກົດລະບຽບໃນການຄຸ້ມຄອງປ່າປ້ອງກັນພູຈອມໃຫ້ປະຊາຊົນ ໂດຍເມືອງຈະເປັນຕົວຫຼັກໃນການສະໜັບສະໜູນດ້ານວິຊາການ, ການປະສານງານກັບປາຊົນກັບພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ແລະ ປຸກລະດົມປະຊາຊົນໃນການສ້າງປ່າປ້ອງກັນຂອງບ້ານຫ້ວຍຊາຍ. ເມືອງໄດ້ສະເໜີຫາໂຄງການໃຫ້ມີການລົງບ້ານຄັ້ງທີ 4 ຂອງອາສາສະໝັກເພື່ອສະໜັບສະໜູນງົບປະມານ ໃນການສ້າງກົດລະບຽບຂອງບ້ານຢ່າງເປັນທາງການ ແລະ ເຜີຍແຜ່ກົດໝາຍທີ່ກ່ຽວຂ້ອງກັບການສ້າງປ່າປ້ອງກັນໃຫ້ກັບປະຊາຊົນບ້ານຫ້ວຍຊາຍ. ໃນທີ່ສຸດ ບ້ານຫ້ວຍຊາຍກໍໄດ້ຮັບການສະໜັບສະໜູນຈາກຂັ້ນເມືອງ, ໂຄງການ ແລະ ອາສາສະໝັກໃນການສ້າງກົດລະບຽບປ່າປ້ອງກັນພູຈອມທີ່ນອນໃນເຂດຄຸ້ມຄອງຂອງບ້ານ. ບ້ານໄດ້ມີກົດລະບຽບຢ່າງເປັນທາງການລວມມີຈຸດປະສົງ, ເຂດຄຸ້ມຄອງປ່າປ້ອງກັນ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ (ຄະນະຄຸ້ມຄອງ, ໜ່ວຍງານລາດຕະເວນ ແລະ ຊາວບ້ານ) ໂດຍການເຊັນຮັບຮອງຈາກຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ. ກົດລະບຽບນີ້ຊ່ວຍໃຫ້ບ້ານຄຸ້ມຄອງປ່າປ້ອງກັນສະດວກຂຶ້ນ ແລະ ເປັນບ່ອນອີງໃຫ້ບ້ານໃນປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຂອງບ້ານ ແລະ ບ້ານມີຄວາມໝັ້ນໃຈໃນການປະຕິບັດລະບຽບຕໍ່ຜູ້ກະທຳຜິດ ໂດຍບໍ່ຕ້ອງໄດ້ຂໍຄວາມຊ່ວຍເຫຼືອຈາກເມືອງທຸກໆ ກໍລະນີຄືໄລຍະຜ່ານມາ.

**ລະດັບຊາດ:**

ກິດຈະກຳຂອງອາສາສະໝັກແມ່ນສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍຂອງພາກລັດໃນການສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍປ່າໄມ້ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ໃນປະເທດລາວ. ໂດຍສະເພາະກົດໝາຍປ່າໄມ້ເລກທີ 70 ລົງວັນທີ 21 ມິຖຸນາ 2019 ມາດຕາ 39 ການວາງແຜນຄຸ້ມຄອງປ່າໄມ້ບ້ານ, ມາດຕາ 47 ການປົກປັກຮັກສາປ່າປ້ອງກັນ, ມາດຕາ 70 ວັກທີ 1 ການປົກປັກຮັກສາທີ່ດິນປ່າປ້ອງກັນ, ແລະ ມາດຕາ 114 ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ປົກປັກຮັກສາ ແລະ ພັດທະນາ. ນອກຈາກນັ້ນ ກໍຍັງມີຄຳແນະນຳວ່າດ້ວຍ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ, ເລກທີ 4143/ກປ, ລົງວັນທີ 3 ຕຸລາ 2023 ທີ່ໄດ້ລະບຸລາຍລະອຽດກ່ຽວກັບຂັ້ນຕອນ, ວິທີການ ແລະ ການວາງແຜນປ່າໄມ້ຂັ້ນບ້ານ. ພ້ອມກັນນັ້ນກໍເປັນການສົ່ງເສີມການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ (ສະບັບປັບປຸງ), ສະບັບເລກທີ23/ສພຊ, ລົງວັນທີ 11 ພຶດສະພາ 2017 ແລະ ກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ, ສະບັບເລກທີ 25/ສພຊ, ລົງວັນທີ 10 ພະຈິກ 2016. ສະນັ້ນ, ກິດຈະກຳຂອງອາສາສະໝັກແມ່ນສົ່ງເສີມການຈັດຕັ້ງປະຕິບັດກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຂອງ ສປປ ລາວ (Rule of Law). ສະນັ້ນ,

ການຈັດຕັ້ງປະຕິບັດກິດຈະກໍາຂອງອາສາສະໝັກບໍ່ພຽງແຕ່ ສ້າງຄວາມເຂົ້າໃຈໃຫ້ປະຊາຊົນໃນການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາມະຊາດແບບຍືນຍົງ, ປະກອບ ສ່ວນໃນວຽກງານການຄຸ້ມຄອງປ່າໄມ້, ແຫຼ່ງນ້ໍາ ແລະ ສິ່ງແວດລ້ອມຂອງເມືອງ ແລະ ແຂວງ, ພ້ອມທັງເປັນສ່ວນໜຶ່ງໃນການສົ່ງເສີມການຈັດຕັ້ງປະຕິບັດກົດໝາຍລະດັບຊາດ. ການສົ່ງເສີມໃຫ້ມີການສ້າງຕັ້ງປ່າປ້ອງກັນບ້ານ ແລະ ການສ້າງຕັ້ງປ່າໄມ້ບ້ານຫ້ວຍຊາຍ ແມ່ນການສົ່ງເສີມໃຫ້ມີການຄຸ້ມຄອງປ່າໄມ້ໃນຂັ້ນບ້ານໃຫ້ມີຄວາມຍືນຍົງ ຊຶ່ງວ່າປ່າປ້ອງກັນຂອງບ້ານກໍແມ່ນປ່າປ້ອງກັນແຫ່ງຊາດ ເປັນການປະກອບສ່ວນໃນການອະນຸລັກປ່າປ້ອງກັນກໍຄືປ່າໄມ້ຂອງຊາດ.

ນອກຈາກນັ້ນ, ການປູກຈິດສໍານຶກເລື່ອງການຄຸ້ມຄອງປ່າໄມ້ແບບຍືນຍົງແມ່ນເປັນບົດຮຽນອັນໃໝ່ ແລະ ເປັນບົດຮຽນທີ່ດີໃຫ້ກັບສະຖາບັນການສຶກສາ ໂດຍສະເພາະແມ່ນ ຄະນະນິຕິສາດ ແລະ ລັດຖະສາດ (ຄນລ) ມະຫາວິທະຍາໄລແຫ່ງຊາດ. ເນື່ອງຈາກວ່າອາຈານຈາກ ຄນລ ໄດ້ມີການຕິດຕາມກິດຈະກໍາຢ່າງເປັນປົກກະຕິ ເຮັດໃຫ້ເຂົ້າໃຈກ່ຽວກັບຄວາມສໍາຄັນຂອງການອະນຸລັກ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ ເຊິ່ງບໍ່ໄດ້ຢູ່ໃນຫຼັກສູດການສອນຂອງໂຮງຮຽນເລີຍ. ແຕ່ຍ້ອນກິດຈະກໍາຂອງອາສາສະໝັກທີ່ເປັນນັກສຶກສາ ຄນລ ຈຶ່ງເຮັດໃຫ້ສະຖາບັນການສຶກສາກໍຄື ຄນລ ໄດ້ມີສ່ວນຮ່ວມໃນການປະກອບສ່ວນເຂົ້າໃນການອະນຸລັກ ແລະ ປົກປັກຮັກສາປ່າໄມ້ ໃນຂັ້ນບ້ານໃຫ້ມີຄວາມຍືນຍົງ. ພ້ອມກັນນັ້ນ ບົດຮຽນຈາກການປະຕິບັດກິດຈະກໍາຂອງອາສາສະໝັກຍັງຖືວ່າການເປັນການຮຽນຮູ້ ແລະ ການສະສົມປະສົບການພາກສະໜາມ. ເຫັນໄດ້ວ່າການອະນຸ ລັກ ແລະ ການຄຸ້ມຄອງປ່າໄມ້ແມ່ນເປັນອົງປະກອບໜຶ່ງທີ່ສໍາຄັນຂອງສະຖາບັນການສຶກສາ ແລະ ປະສົບການພາກສະໜາມໃນການປະຕິບັດກິດຈະກໍາຂອງໄວໜຸ່ມແມ່ນສາມາດນໍາມາປັບໃຊ້ໃນຫຼັກສູດການສອນຂອງ ສູນບໍລິການກົດໝາຍເພື່ອປະຊາຊົນ (CLE) ກໍຄື ຄນລ.

ຮູບທີ 12: ກິດຈະກໍາການສ້າງລະບຽບຄຸ້ມຄອງປ່າປ້ອງກັນບ້ານຫ້ວຍຊາຍ





ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org